# ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດທີ 16 ເມສາ 2017 (4-16-2017)

---

## ພຣະອົງຊົງຄືນພຣະຊົນ

*ດົນປານໃດແລ້ວ ທີ່ທ່ານຕົກຕະລຶງຢ່າງໃຫຍ່?*

**ຈຸດສຳຄັນໃນບົດຮຽນ**: ການຄືນມາຈາກຕາຍຂອງພຣະເຢຊູແມ່ນຫຼັກຖານທີ່ທ່ານສາມາດກໍ່ສ້າງຊີວິດຂອງທ່ານຂຶ້ນໄດ້.

**ພຣະຄັມພີຕອບສນອງຕໍ່ຊີວິດ**:

ຄວາມເຈັບປວດ, ຄວາມສົງສັຍ, ແລະຄວາມຜິດຫວັງ. ພວກເຮົາທັງໝົດເຄີຍໄດ້ລົ້ມລຸກຄຸກຄານກັບສິ່ງເຫຼົ່ານີ້ມາແລ້ວບໍ່ຍາມໃດກໍຍາມນຶ່ງ. ຂ້າພະເຈົ້າແນ່ໃຈວ່າພວກເຮົາທັງໝົດໄດ້ປະເຊີນສະຖານະການເຫຼົ່ານັ້ນມາແລ້ວ. ທັງໂລກເບິ່ງປາກົດວ່າມືດມົນໄປໝົດເມື່ອພວກເຮົາບໍ່ມີຄວາມຄິດວ່າຈະມີຫຍັງເກີດຂຶ້ນຕໍ່ໄປ ຫຼືພວກເຮົາຄວນຈະເຮັດຢ່າງໃດເພື່ອຊ່ວຍສະຖານະການນັ້ນ.

ໃນຂ່າວປະເສີດລູກາ, ພວກເຮົາໄດ້ອ່ານກ່ຽວເຣື່ອງຜູ້ຍິງກຸ່ມນຶ່ງທີ່ສົງສັຍແລະຜິດຫວັງ. ເຂົາເຈົ້າໄດ້ທໍ້ແທ້ຕໍ່ການເຮັດໃນສິ່ງທີ່ຈຳເປັນຈະຕ້ອງໄດ້ເຮັດ ຊຶ່ງຂັດເຄືອງຕໍ່ຄວາມຮູ້ສຶກຂອງເຂົາເຈົ້າ ແຕ່ວ່າເຂົາເຈົ້າກໍຕົກຢູ່ໃນຄວາມຄາດບໍ່ເຖິງແລະຄວາມຕື່ນເຕັ້ນຢ່າງໜ້າຊົມຊື່ນຍິນດີທີ່ຈະເກີດຂຶ້ນໃນຂ້າງໜ້າ. ພຣະເຢຊູຊົງຄືນພະຊົນແລະກໍເປັນເຫດການທີ່ປ່ຽນແປງທຸກສິ່ງຢ່າງ.

ພຣະເຢຊູຍັງຊົງຊີວິດຢູ່ແລະໄດ້ປ່ຽນແປງທຸກສິ່ງຢ່າງສຳລັບພວກເຮົາ, ເຊັ່ນດຽວກັນ. ໃນຂະນະນັ້ນເມື່ອຄວາມໝົດຫວັງແລະຄວາມສົງສັຍເກີດຂຶ້ນ, ພວກເຮົາສາມາດໂຕ້ຕອບດ້ວຍຄວາມຫວັງແລະລຸກຂຶ້ນກັບພຣະຄຣິດທີ່ຊົງຄືນພຣະຊົນມາແລ້ວນັ້ນ.

ການຄືນພຣະຊົນຂອງພຣະເຢຊູແມ່ນຂໍ້ມູນທີ່ເປັນພື້ນຖານທີ່ແຂງແກ່ນ. ໃນຖ້າມກາງຄວາມເຈັບປວດຂອງທ່ານ, ຄວາມສົງສັຍ, ແລະຄວາມຜິດຫວັງ, ການຄືນພຣະຊົນຂອງພຣະອົງແມ່ນເໝາະຕໍ່ຊີວິດທ່ານໃນທາງທີ່ຕື່ນເຕັ້ນ. ທ່ານຕຽມພ້ອມທີ່ຈະຄົ້ນຄວ້າຫາວ່າຈະເຮັດວິທີໃດບໍ່?

**ພຣະຄັມພີກ່າວວ່າຢ່າງໃດ?** ( ເບິ່ງຕາມຫົວຂໍ້ 1, 2 ແລະ 3 )

### ການສຶກສາພຣະຄັມພີ

**1. <u>ລູກາ 24:1-6ກ</u>:**

*1 ແຕ່ຮຸ່ງເຊົ້າວັນຕົ້ນສັປດາ ຜູ້ຍິງເຫຼົ່ານັ້ນໄດ້ນຳເອົາເຄື່ອງຫອມທີ່ຈັດໄວ້ນັ້ນມາເຖິງອຸບໂມງ 2. ແລະເຂົາໄດ້ເຫັນກ້ອນຫີນນັ້ນກິ້ງອອກຈາກປາກອຸບໂມງແລ້ວ. 3. ເມື່ອເຂົ້າໄປທາງໃນແລ້ວເຂົາກໍບໍ່ເຫັນພຣະສົບ. 4 ເມື່ອເຂົາກຳລັງຄຶດສງົນສົນເທດ້ວຍເຫດການນັ້ນ ເບິ່ງແມ, ມີຊາຍສອງຄົນຢືນຢູ່ໃກ້ເຂົາ ນຸ່ງເຄື່ອງອັນງົດງາມຈົບເຫຼື້ອມຕາ 5 ຝ່າຍແມ່ຍິງເຫຼົ່ານັ້ນກໍຢ້ານແລະກົ້ມໜ້າລົງເຖິງດິນ ສອງຄົນນັ້ນໄດ້ຖາມເຂົາວ່າ, "ພວກນາງຊອກຄົນເປັນໃນໝູ່ຄົນຕາຍເຮັດຫຍັງ 6ກ. (ພຣະອົງບໍ່ປະທັບຢູ່ທີ່ນີ້ ແຕ່ຖືກຊົງບັນດານໃຫ້ເປັນຄືນມາແລ້ວ)*

ທົ່ວທັງໂລກນີ້ ບ່ອນໃດກໍຕາມທີ່ມີຄຣິສຕຽນຮວມຊຸມນຸມກັນ ວັນຄືນພຣະຊົນເປັນເວລາສເລີມສລອງທີ່ຍິ່ງໃຫຍ່. ແຕ່ວ່າໃນຕອນເຊົ້າຂອງວັນອາທິດທໍາອິດນັ້ນຫຼັງຈາກທີ່ພຣະເຢຊູຄືນມາຈາກຕາຍນັ້ນມີແຕ່ຄວາມປີຕິຍິນດີເທົ່ານັ້ນສໍາລັບພວກສາວົກຂອງພຣະອົງ. ກ່ອນໜ້ານັ້ນແມ່ນວັນແຫ່ງຄວາມຕາຍ, ຄວາມສົງສັຍ, ແລະວັນແຫ່ງຄວາມຜິດຫວັງ.

ພຣະເຢຊູໄດ້ສິ້ນພຣະຊົນແລະໄດ້ຖືກຝັງໄວ້, ເປັນການຕາຍທີ່ໜ້າອັບອາຍຕໍ່ໜ້າຝູງຊົນທີ່ໄດ້ເຫັນຢ່າງໜ້າຕື່ນເຕັ້ນ. ໃນສັງຄົມຂອງຊາວໂຣມັນໃນສັດຕະວັດທີນຶ່ງ, ການຖືກຄຶງຕາຍທີ່ໄມ້ກາງແຂນເປັນການຕາຍທີ່ໂຫດຮ້າຍທີ່ສຸດ ຈົນຊາວໂຣມັນເອງກໍບໍ່ສາມາດເວົ້າເຖິງມັນຕໍ່ໜ້າປວງຊົນ. ພວກສາວົກໄດ້ເປັນພະຍານຕໍ່ການຕາຍອັນແສນເຈັບປວດຂອງພຣະເຢຊູ, ແລະສິ່ງທີ່ເຂົາເຈົ້າເຮັດໄດ້ກໍຄືຄວາມໂສກເສົ້າສລົດໃຈ.

ພຣະເຢຊູໄດ້ສິ້ນຊີວິດສອງສາມຊົ່ວໂມງກ່ອນຈະເຖິງວັນຊະບາໂຕຂອງຊາວຢິວ. ຕາເວັນກໍໃກ້ຈະຕົກແລ້ວ, ພວກທີ່ຕິດຕາມພຣະເຢຊູທັງໝົດກໍຟ້າວຈັດຕຽມຫໍ່ສົບຂອງພຣະອົງແລະປົງໄວ້ໃນອຸບໂມງ. ເມື່ອຕາເວັນຕົກໄດ້ມາເຖິງແລ້ວ, ຄວາມມືດກໍປົກຄຸມທ້ອງຟ້າ ແລະຄວາມມືດອີກຢ່າງນຶ່ງກໍປົກຄຸມຈິດໃຈຂອງເຂົາເຈົ້າ. ຜູ້ທີ່ເຂົາເຈົ້າວາງຄວາມຫວັງໃສ່ນັ້ນໄດ້ຕາຍເສັຽແລ້ວ.

ເມື່ອແສງຕາເວັນໃນຕອນເຊົ້າວັນອາທິດໄດ້ພຸ່ງຂຶ້ນ, ກຸ່ມພວກຜູ້ຍິງຊຶ່ງລວມທັງນາງມາລີອາໄທມັກດາລາ, ໂຢຮັນນາ, ແລະນາງມາຣີອາແມ່ຂອງຢາໂກໂບ (ເບິ່ງ ລູກາ 24:10) ໄດ້ພາກັນໄປທີ່ອຸບໂມງຂອງພຣະເຢຊູພ້ອມທັງເຄື່ອງຫອມທີ່ຈະຕົບແຕ່ງໃນການຝັງສົບພຣະອົງ. ນີ້ແມ່ນພິດຕິກັມທັມມະດາຂອງພວກຜູ້ຍິງທີ່ຕ້ອງເຮັດ, ຊຶ່ງລວມທັງການຊໍາຮະລ້າງສົບແລະທາສົງດ້ວຍນໍ້າມັນ. ພວກເຂົາເຈົ້າຍັງຕຽມທີ່ຈະຫໍ່ພຣະສົບດ້ວຍຜ້າຝ້າຍລະອຽດລາຍງາມ ຊຶ່ງເປັນເຄື່ອງໝາຍເຖິງຄວາມໂຄຣົບນັບຖື.

*ແມ່ນຫຍັງແດ່ໃນປະເພນີພວກເຮົາທີ່ພະຍາຍາມອະທິບາຍໃຫ້ບິດເບືອນອອກຈາກການຄືນພຣະຊົນຂອງພຣະເຢຊູ?*

ບໍ່ວ່າພວກຜູ້ຍິງເຫຼົ່ານັ້ນຈະມີແຜນການແນວໃດກໍຕາມ, ເຂົາເຈົ້າໄດ້ພົບກັບຄວາມຕົກຕະລຶງຢ່າງໃຫຍ່: ອຸບໂມງໄດ້ຫວ່າງເປົ່າ. ເຂົາເຈົ້າບໍ່ເຫັນພຣະສົບ, ທ່ານລູກາໄດ້ໃຊ້ຄໍາເວົ້າບັນລະຍາຍພວກຜູ້ຍິງໃນຂະນະນັ້ນວ່າ "ຄຶດສງົນສົນເທ" ໝາຍເຖິງວ່າໃນຄວາມຄິດບໍ່ຮູ້ວ່າຈະເຮັດແນວໃດຕໍ່ໄປເພື່ອຈະມີຄໍາຕອບ. ແຕ່ວ່າມີຊາຍສອງຄົນໄດ້ປາກົດຕົວອະທິບາຍໃນສິ່ງທີ່ພວກຜູ້ຍິງບໍ່ສາມາດຄິດອອກ: "ພຣະອົງບໍ່ປະທັບຢູ່ທີ່ນີ້ ແຕ່ຖືກຊົງບັນດານໃຫ້ເປັນຄືນມາແລ້ວ!"

ພວກເຮົາຈະຮູ້ໄດ້ແນວໃດວ່າພຣະເຢຊູຊົງພຣະຊົນຢູ່? ອຸບໂມງຂອງພຣະອົງຫວ່າງເປົ່າ! ພວກຊາວໂລກພາກັນພະຍາຍາມອະທິບາຍໃຫ້ບິດເບືອນຈາກການຄືນພຣະຊົນ, ແຕ່ພວກເຮົາບໍ່ສາມາດອະທິບາຍໃຫ້ບິດເບືອນຈາກອຸບໂມງທີ່ຫວ່າງເປົ່ານັ້ນ. ບໍ່ແມ່ນສົບຂອງພຣະອົງຖືກລັກເອົາໄປບໍ່, ຫຼືວ່າພວກຜູ້ຍິງເຂົ້າໄປຜິດອຸບໂມງ, ຄວາມຄິດໃນການຄືນພຣະຊົນຈະຖືກປະຕິເສດໂດຍການທີ່ໄປຖືກອຸບໂມງຫຼືສ້າງພຣະກາຍຂອງພຣະເຢຊູຂຶ້ນໃໝ່. ມັນບໍ່ໄດ້ເປັນແນວນັ້ນ.

ຄ້າຍຄືກັນ, ຖ້າວ່າທ່ານລູກາຫາກພະຍາຍາມແຕ່ງເຣື່ອງທີ່ບໍ່ໄດ້ເກີດຂຶ້ນຈິງ, ທ່ານຄົງຈະຕ້ອງເອີ່ຍເຖິງພວກສາວົກຂອງພຣະເຢຊູໃຫ້ເປັນພະຍານເຣື່ອງອຸບໂມງຫວ່າງເປົ່າ ຫລືພວກຜູ້ຊາຍບາງຄົນ. ເປັນດ້ວຍເຫດໃດ? ໃນຕອນນັ້ນຄໍາພະຍານຂອງຜູ້ຍິງຖືວ່າເຊື່ອຖືບໍ່ໄດ້ໃນສານ, ຜູ້ຍິງເປັນພະຍານທີ່ເຊື່ອຖືບໍ່ໄດ້. ແຕ່ວ່າທ່ານລູກາຍຶດໝັ້ນໃນຫຼັກຂໍ້ມູນທັງປວງ: ອຸບໂມງຫວ່າງເປົ່າຂອງພຣະເຢຊູ, ແລະພວກຜູ້ຍິງເປັນພະຍານກຸ່ມທໍາອິດຕໍ່ເຫດການນັ້ນ.

## 2. <u>ລູກາ 24:6ຂ-8</u>:

*6ຂ. ເຖິງຄໍາທີ່ພຣະອົງຊົງກ່າວກັບທ່ານທັງຫຼາຍ ເມື່ອພຣະອົງຍັງຢູ່ໃນແຂວງຄາລີເລນັ້ນ. 7. ວ່າບຸດມະນຸດຈະຕ້ອງຖືກມອບໄວ້ໃນມືຄົນບາບ ຈະຖືກຄຶງໄວ້ທີ່ໄມ້ກາງແຂນ ແລະໃນວັນຖ້ວນສາມກໍຈະຄືນມາອີກ'. 8. ແມ່ຍິງເຫຼົ່ານັ້ນໄດ້ລະນຶກເຖິງຖ້ອຍຄໍາຂອງພຣະອົງ.*

ອຸບໂມງຫວ່າງເປົ່າບໍ່ສົມຄວນທີ່ຈະເຮັດໃຫ້ພວກຜູ້ຍິງ ຫຼືພວກທີ່ຕິດຕາມພຣະເຢຊູຕົກຕະລຶງ. ຝູງເທວະດາໄດ້ເຕືອນເຂົາເຈົ້າວ່າພຣະເຢຊູເຈົ້າໄດ້ກ່າວໄວ້ຫຼາຍໆເທື່ອແລ້ວກ່ຽວເຣື່ອງການຕາຍແລະການຄືນພຣະຊົນຂອງພຣະອົງ. ພຣະເຢຊູຮູ້ວ່າໄມ້ກາງແຂນຫຍັບໃກ້ເຂົ້າມາແລ້ວ. ນັ້ນແມ່ນຫຼັກຂໍ້ມູນອີກອັນນຶ່ງ ທີ່ຖືກບັນທຶກໄວ້ຫຼາຍໆເທື່ອໃນພຣະຄັມພີຊຶ່ງເຮັດໃຫ້ເຊື່ອຖືໄດ້ຕໍ່ຂໍ້ມູນແຫ່ງປວັດສາດຂອງການຄືນພຣະຊົນ.

| |
|---|
| *ເປັນຫຍັງມັນຈຶ່ງສຳຄັນທີ່ພຣະເຢຊູໄດ້ຮູ້ຈັກລ່ວງໜ້າເຖິງເຣື່ອງທີ່ຈະເກີດຂຶ້ນກັບພຣະອົງ?* |

ໃຫ້ເບິ່ງລາຍລະອຽດຕໍ່ໄປນີ້ທີ່ຂໍ້ມູນອັນນີ້ໄດ້ເປີດເຜີຍໃຫ້ເຫັນ

**ການຕາຍຂອງພຣະເຢຊູບໍ່ແມ່ນອຸບັດເຫດທີ່ໜ້າສັງເວດ.** ພຣະເຢຊູໄດ້ສະເດັດມາໃນໂລກນີ້ໃນເປົ້າໝາຍແຫ່ງຄວາມຮັກເພື່ອຊ່ວຍມະນຸດໃຫ້ລອດພົ້ນທີ່ໄດ້ລິເລີ້ມໃນນິຣັນການ. ອາດາມກັບເອວາຄວນຈະເປັນຜູ້ຖືແບບລັກສະນະຂອງພຣະເຈົ້າ, ຫວ່ານສະງ່າຣາສີຂອງພຣະເຈົ້າໃຫ້ທົ່ວທັງໂລກ. ເມື່ອອາດາມແລະເອວາໄດ້ລະເມີດຕໍ່ພຣະເຈົ້າແລ້ວ, ຄວາມບາບແລະຄວາມຕາຍກໍໄດ້ແຜ່ຂຍາຍ. ເຖິງປານນັ້ນ, ພຣະເຈົ້າບໍ່ໄດ້ຢຸດຢັ້ງຄວາມຮັກຂອງພຣະອົງ, ແຕ່ເປີດການກູ້ພັຍໂດຍຜ່ານຊາຍຄົນນຶ່ງຊື່ວ່າອັບຣາຮາມ, ແລະໂດຍຜ່ານອັບຣາຮາມນີ້ເອງປະເທດອິສຣາເອນຈຶ່ງໄດ້ມີຂຶ້ນ (ເບິ່ງປະຖົມມະການ 12:1-3; ຄາລາເຕັຽ 3:7-9). ຈາກອິສຣາເອນກໍມີພຣະເມຊີອາ ພຣະບຸດຂອງພຣະເຈົ້າຜູ້ທີ່ເຮັດໃຫ້ຄຳສັນຍາຂອງພຣະເຈົ້າຄົບຖ້ວນເພື່ອກູ້ພັຍແລະອວຍພອນໂລກນີ້ ໂດຍການທັນໜີຈາກຄຳສາບແຊ່ງຂອງຄວາມຜິດບາບ (ເບິ່ງ ໂຣມ 5:12-21).

**ພຣະເຢຊູຕາຍທີ່ໄມ້ກາງແຂນແທນບ່ອນຂອງພວກເຮົາ.** ພຣະເຢຊູເຕັມໃຈໄປທີ່ໄມ້ກາງແຂນ. ພຣະອົງບໍ່ມີບາບຂອງພຣະອົງເອງແຕ່ພຣະອົງຕາຍແທນຄວາມຜິດບາບຂອງພວກເຮົາ. ພຣະອົງກະທຳເຊັ່ນນີ້ເພື່ອພວກເຮົາຈະສາມາດຮັບການອະພັຍໂທຍຕລອດໄປເປັນນິດ ແລະຄວາມຜິດບາບຂອງພວກເຮົາຈະຖືກລືມຕລອດໄປເປັນນິດດ້ວຍ. ເມື່ອຜົນອອກມາຢ່າງນີ້ແລ້ວ. ພວກເຮົາໄດ້ຖືກຮັບຮູ້ວ່າເປັນຄົນຊອບທັມໃນພຣະຄຣິດ(ເບິ່ງ 2 ໂກຣິນໂທ 5:21).

**ພຣະເຢຊູໄດ້ຊະນະຄວາມບາບສຳລັບພວກເຮົາ.** ເມື່ອພຣະເຈົ້າເຮັດໃຫ້ພຣະເຢຊູຄືນມາຈາກຕາຍ, ຄວາມຕາຍບໍ່ມີອຳນາດເໜືອພວກເຮົາ(ກິຈການ 2:24). ພຣະເຢຊູໄດ້ຄືນຈາກຄວາມຕາຍ, ແລະພວກເຮົາກໍຈະເປັນດັ່ງນັ້ນເໝືອນກັນ (2 ໂກຣິນໂທ 4:14). ໂດຍທາງຄວາມເຊື່ອໃນພຣະເຢຊູ, ພວກເຮົາຮວມເປັນນຶ່ງດຽວກັບພຣະອົງໂດຍຕລອດໄປເປັນນິດ (ໂຣມ 6:1-11).

ພຣະເຢຊູໄດ້ມາໃນໂລກນີ້ເພື່ອໃຫ້ຄົບສົມບູນຕາມແຜນການ ທີ່ຈິງແລ້ວໄດ້ຖືກກ່າວໄວ້ເປັນເວລາຫຼາຍໆພັນປີ. ນີ້ແມ່ນແຜນການທີ່ໄດ້ປົກຄຸມປວັດສາດຂອງມະນຸດແຕ່ເລີ້ມທັນໃຈມາ ແລະສືບຕໍ່ມີສ່ວນຈົນເຖິງທຸກວັນນີ້. ມີແຕ່ພຣະເຈົ້າເທົ່ານັ້ນທີ່ສາມາດບັນລຸແຜນການນັ້ນ ແລະພຣະອົງໄດ້ກະທຳສຳເຣັດແລ້ວ!

### 3. <u>ລູກາ 24:36-40</u>:

*36 ເມື່ອເຂົາທັງສອງກຳລັງເລົ່າເຫດການທັງປວງນັ້ນຢູ່ ອົງພຣະເຢຊູໄດ້ຊົງຢືນຢູ່ຖ້າມກາງເຂົາ(ໂດຍຊົງກ່າວວ່າ, "ສັນຕິສຸກຈົ່ງມີແກ່ທ່ານທັງຫຼາຍ"). 37. ຝ່າຍເຂົາກໍຢ້ານສະດຸ້ງຕົກໃຈໂດຍຄຶດວ່າເຫັນຜີ. 38. ພຣະອົງຈຶ່ງຊົງກ່າວແກ່ເຂົາວ່າ, "ທ່ານທັງຫຼາຍວຸ້ນວາຍເຮັດຫຍັງ ດ້ວຍເຫດໃດຄວາມຄຶດສງົບສົນເທຈຶ່ງເກີດຂຶ້ນໃນໃຈຂອງພວກທ່ານ? 39. ຈົ່ງເບິ່ງມືແລະຕີນຂອງເຮົາວ່າແມ່ນເຮົາເອງ ຈົ່ງຄຳເບິ່ງຕົວເຮົາ ເພາະວ່າຜີບໍ່ມີເນື້ອບໍ່ມີດູກເໝືອນກັບທ່ານເຫັນເຮົາມີຢູ່ນີ້" 40. ເມື່ອຊົງກ່າວດັ່ງນັ້ນແລ້ວ ພຣະອົງກໍຊົງສະແດງພຣະຫັດແລະພຣະບາດໃຫ້ເຂົາເຫັນ.*

ນີ້ບໍ່ແມ່ນພາບຫຼອກຫຼອນ. ແມ່ນແລ້ວ, ບາງຄັ້ງພວກເຮົາສາມາດບັງຄັບພວກເຮົາເອງໃຫ້ເຫັນໃນບາງສິ່ງເພາະພວກເຮົາຕ້ອງການຢາກເຫັນແທ້ໆ, ແຕ່ວ່າພວກສາວົກບໍ່ນຶກຝັນທີ່ຈະເຫັນພຣະເຢຊູ. ຄວາມຈິງແລ້ວ, "ຝ່າຍເຂົາກໍຢ້ານສະດຸ້ງຕົກໃຈ" ເໝືອນກັນກັບພວກຜູ້ຍິງໃນຕອນເຊົ້ານັ້ນ (ຂໍ້ 5). ພວກເຂົາຄຶດວ່າພວກຕົນໄດ້ເຫັນຜີ

ພຣະເຢຊູຊົງຮູ້ວ່າເຂົາເຈົ້າກຳລັງຄຶດອັນໃດຢູ່, ພຣະອົງຈຶ່ງສເນີໃຫ້ຫາຍສົງສັຍ:ຈົ່ງເບິ່ງມືແລະຕີນຂອງເຮົາວ່າແມ່ນເຮົາເອງ! ຈົ່ງຄຳເບິ່ງຕົວເຮົາ ເພາະວ່າຜີບໍ່ມີເນື້ອບໍ່ມີດູກເໝືອນກັບທ່ານເຫັນເຮົາມີຢູ່ນີ້" ມີຂໍ້ພິສູດອັນໃດອີກແດ່? ອຸບໂມງໄດ້ຫວ່າງເປົ່າ, ເໝືອນດັ່ງທີ່ພຣະອົງຊົງກ່າວໄວ້, ແລະດຽວນີ້ພຣະອົງຢືນຕໍ່ໜ້າເຂົາເຈົ້າທາງເນື້ອໜັງຮ່າງກາຍ ຊົງມີຊີວິດຢູ່ແລະປົກກະຕິດີ.

| |
|---|
| *ພຣະເຢຊູໄດ້ພິສູດພຣະອົງເອງແນວໃດຕໍ່ທ່ານໃນອະດີດ?* |

ປວັດສາດໄດ້ຖືກປ່ຽນແປງເມື່ອພຣະເຢຊູຄືນມາຈາກຕາຍໃນຕອນເຊົ້າມືດຂອງວັນອາທິດ ຄວາມບາບ ແລະຄວາມຕາຍໄດ້ຖືກຜ່າຍແພ້ໂດຍການປົກຄອງຂອງກະສັດ. ຣິດອຳນາດດຽວກັນນັ້ນທີ່ເຮັດໃຫ້ພຣະເຢຊູຄືນມາຈາກຕາຍແມ່ນກຳລັງທຳງານຢູ່ໃນຜູ້ທີ່ເຊື່ອວາງໃຈໃນພຣະອົງ (ໂຣມ 8:9-11). ເພາະວ່າພຣະເຢຊູໄດ້ຄືນຈາກຫລຸມຝັງສົບ, ຊີວິດອັນສົມບູນຂອງພຣະອົງກໍເປັນຂອງພວກເຮົາໂດຍຜ່ານຄວາມເຊື່ອໃນພຣະອົງ.

| |
|---|
| *ແມ່ນຫຍັງທີ່ເຮັດໃຫ້ການຄືນພຣະຊົນສຳຄັນສຳລັບຜູ້ທີ່ເຊື່ອໃນເວລານີ້?* |

## <u>ນຳໃຊ້ໃນຊີວິດ</u>:

ການຄືນພຣະຊົນຂອງພຣະເຢຊູຄຣິດແມ່ນຫຼັກຄວາມຈິງຂອງປວັດສາດ. ໃນອາທິດທີ່ຈະມານີ້ຢາກສເນີບາງປະການເພື່ອການຕອບໂຕ້ຕໍ່ຂໍ້ມູນນັ້ນ.

**ເຊື່ອ.** ຖ້າຫາກວ່າທ່ານຍັງບໍ່ທັນອ້າແຂນຮັບຄວາມຈິງຂອງການຄືນພຣະຊົນຂອງພຣະຄຣິດ ແລະຍັງບໍ່ມີຄວາມໝາຍຫຍັງສຳລັບຊີວິດຂອງທ່ານ, ໃຫ້ຮັບເອົາດຽວນີ້ເສັຽ. ເວົ້າກັບຫົວໜ້າກຸ່ມຂອງທ່ານກ່ຽວກັບການຕັດສິນໃຈໃນການເຊື່ອວາງໃຈແລະຕິດຕາມພຣະຄຣິດຂອງທ່ານ.

**ສຶກສາ.** ອ່ານເພີ້ມເຕີມກ່ຽວກັບຫຼັກຖານປວັດສາດທີ່ພິສູດການເປັນຄືນມາຈາກຕາຍຂອງພຣະຄຣິດ.

**ແບ່ງປັນ.** ທຸກໆມື້ເວົ້າລົມກັບພຣະເຈົ້າຂໍໃຫ້ພຣະອົງເປີດໂອກາດໃຫ້ທ່ານໄດ້ແບ່ງປັນຄວາມເຊື່ອຂອງທ່ານກັບຄົນອື່ນທີ່ຍັງບໍ່ເຊື່ອໃນພຣະຄຣິດເທື່ອ.

ພວກສາວົກໄດ້ພາກັນຢ້ານກົວ. ເຂົາເຈົ້າສົງສັຍຄວາມຈິງຂອງການຄືນພຣະຊົນ. ແລະເຖິງປານນັ້ນເຂົາເຈົ້າກໍໄດ້ຖືກປ່ຽນແປງຢ່າງໃຫຍ່ຫຼວງໂດຍພຣະຄຣິດແລະໄດ້ໃຊ້ທາງອັນສຸດຍອດເພື່ອຈັດຕຽມຣາຊອາຈັກຂອງພຣະອົງໃນໂລກນີ້ ຄວາມຈິງແລ້ວມັນສາມາດເກີດຂຶ້ນສຳລັບພວກເຮົາເໝືອນກັນ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ແປໂດຍ PA**